# ແຜນການຂອງປະເທດລາວ

## 1. ການນຳໃຊ້

**1.1** ເອກະສານສະບັບນີ້ປະກອບເປັນແຜນການຂອງປະເທດ ຕາມທີ່ໄດ້ກ່າວເຖິງໃນເງື່ອນໄຂການທະນາຄານທົ່ວໄປ ຂອງ ANZ ແລະ ກຳນົດເງື່ອນໄຂພິເສດຂອງປະເທດ ທີ່ທະນາຄານຈະມອບໃຫ້ລູກຄ້າທີ່ມີ ໜຶ່ງ ຫຼື ຫຼາຍ ບັນຊີ ຫຼື ການບໍລິການໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (“**ສປປ ລາວ**”).

**1.2** ຕາຕະລາງແຜນການຂອງປະເທດລາວສະບັບນີ້ເປັນ ສ່ວນເພີ່ມເຕີ່ມໃຫ້ກັບເງື່ອນໄຂການທະນາຄານທົ່ວໄປ ຂອງ ANZ. ຄຳສັບທີ່ພິມເປັນໂຕໃຫຍ່ທີ່ຖືກນຳໃຊ້ໃນ ຕາຕະລາງແຜນການຂອງປະເທດລາວສະບັບນີ້ແມ່ນ ມີຄຳນິຍາມສະເພາະໃນຕາຕະລາງຄຳນິຍາມທີ່ເປັນ ສ່ວນເພີ່ມເຕີ່ມໃຫ້ກັບເງື່ອນໄຂການທະນາຄານທົ່ວໄປ ຂອງ ANZ.

## 2. ເງື່ອນໄຂການທະນາຄານທົ່ວໄປຂອງ ANZ

**2.1** **ການແປງສະກຸນເງິນ ແລະ ການໂອນເງິນ**. ທະນາຄານ ຈະບໍ່ມີພັນທະໃນການການແປງສະກຸນເງິນ ແລະ ການ ໂອນເງິນທີ່ຕິດພັນກັບການດຳເນີນງານຂອງບັນຊີ ຫຼື ບົດບັນຍັດຂອງການບໍລິການ (ລວມທັງ, ໂດຍບໍ່ມີ ເງື່ອນໄຂ, ການຊຳລະສະສາງລະຫວ່າງປະເທດ ແລະ ບົດບັນຍັດກ່ຽວພັນກັບການບໍລິການສະພາບຄ່ອງ) ຖ້າຫາກວ່າບໍ່ມີການກຳນົດໃນກົດໝາຍທີ່ກ່ຽວຂ້ອງ, ທະນາຄານຕ້ອງບໍ່ມີການລຳອຽງ ຕໍ່ສິດອື່ນໆທີ່ລະບຸ ໃນຂໍ້ຕົກລົງສະບັບນີ້, ດຳເນີນການທີ່ເປັນທາງເລືອກ ອື່ນໆຕາມທີ່ເຫັນວ່າເໝາະສົມ. ລູກຄ້າຮັບເອົາ ແລະ ຮັບປະກັນຕໍ່ທະນາຄານວ່າ ການມອບໝາຍຄຳສັ່ງ ໃຫ້ທະນາຄານ ບໍ່ວ່າຈະເປັນການແປງສະກຸນເງິນ ແລະ ການໂອນເງິນຈະບໍ່ຂັດຕໍ່ ບັນດາ ກົດໝາຍທີ່ກ່ຽວຂ້ອງ.

**2.2** **ອັດຕາແລກປ່ຽນ**. ບັນດາອັດຕາແລກປ່ຽນລະຫວ່າງ ເງິນກີບ (LAK) ແລະ ສະກຸນເງິນຕ່າງປະເທດ ທີ່ ທະນາຄານແລກປ່ຽນຈາກເງິນສົດໃຫ້ລູກຄ້າເພື່ອນຳ ໃຊ້ເຂົ້າໃນການດຳເນີນການເຄື່ອນໄຫວບັນຊີ ຫຼື ເງື່ອນໄຂການໃຫ້ບໍລິການ ແມ່ນຢູ່ພາຍໃຕ້ ອັດຕາ ແລກປ່ຽນທີ່ໄດ້ຮັບອະນຸຍາດຕາມກົດໝາຍທີ່ກ່ຽວຂ້ອງ.

**2.3** **ການຫັກລ້າງໜີ້**. ລູກຄ້າຮັບຮູ້ວ່າທະນາຄານມີສິດຫັກລ້າງ ໜີ້ທີ່ທະນາຄານຕິດລູກຄ້າ ໂດຍນຳໃຊ້ໜີ້ທີ່ລູກຄ້າຕິດ ທະນາຄານ. ທະນາຄານອາດຈະ, ໃນທຸກໄລຍະເວລາ, ຖ້າຫາກບໍ່ຂັດຕໍ່ລະບຽບກົດໝາຍ, ແລະ ໂດຍບໍ່ຕ້ອງແຈ້ງ ໃຫ້ລູກຄ້າຮັບຮູ້, ຫັກລ້າງໜີ້ທີ່ທະນາຄານຕິດລູກຄ້າ ໂດຍນຳໃຊ້ໜີ້ທີ່ລູກຄ້າຕິດທະນາຄານ.

**2.4** **ການເປີດເຜີຍຂໍ້ມູນ**. ລຸກຄ້າອາດຈະແຈ້ງໃຫ້ທະນາຄານ ຮັບຊາບເປັນລາຍລັກອັກສອນ, ຢ່າງໜ້ອຍບໍ່ຕໍ່າກວ່າ 35 ວັນປະຕິທິນ ຖ້າຫາກວ່າລູກຄ້າຍົກເລີກການອະນຸມັດ ການເປີດເຜີຍຂໍ້ມູນໃຫ້ ກ) ຜູ້ກ່ຽວຂ້ອງກັບລູກຄ້າ, ຂ) ຜູ້ໄດ້ຮັບການແຕ່ງຕັ້ງຢ່າງແທ້ຈິງ ຫຼື ຮ້ອງຂໍແຕ່ງຕັ້ງ ໂດຍທະນາຄານ, ຫຼື ຜູ້ມີສ່ວນຮ່ວມຫຼັກ ຫຼື ຍ່ອຍ ຫຼື ຜູ້ຮັບໂອນ, ຄ) ຫ້ອງການ, ສາຂາ, ຜູ້ກ່ຽວຂ້ອງ, ບໍລິສັດ ລູກ, ພະນັກງານ ຫຼື ນາຍໜ້າ, ງ) ຜູ້ກວດສອບ ຫຼື ທີ່ປຶກ ສາມືອາຊີບຂອງທະນາຄານ ຫຼື ສະມາຊິກກຸ່ມທະນາຄານ, ຈ) ບຸກຄົນທີສາມ ຫຼື ຜູ້ສະໜອງລະບົບບຸກຄົນທີສາມໃຫ້ ທະນາຄານ ຫຼື ສະມາຊິກຂອງກຸ່ມທະນາຄານ, ຜູ້ສະໜອງ ລະບົບບຸກຄົນທີສາມຜູ້ທີ່ທ່ານສະເໜີຜ່ານທະນາຄານ. ໃນການຂໍຍົກເລີກການອະນຸມັດການເປີດເຜີຍຂໍ້ມູນ ດັ່ງກ່າວ, ທະນາຄານຂໍສະຫງວນສິດໃນການຍົກເລີກ ບັນຊີ ຫຼື ການບໍລິການ ອີງຕາມເງື່ອນໄຂ.

**2.5** **ຂອບເຂດ ແລະ ຂົງເຂດຂອງກົດໝາຍທີ່ນຳໃຊ້**. ໃນກໍລະນີ ທີ່ຂົງເຂດທີ່ຖືກຄຸ້ມຄອງແມ່ນ ສປປ ລາວ, ທະນາຄານ ແລະ ລູກຄ້າແມ່ນຕ້ອງໄດ້ອີງຕາມການຕັດສິນໂດຍສຳນັກງານ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດພາຍໃຕ້ກົດໝາຍ ວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

## 3. ຕາຕະລາງການບໍລິການສະພາບຄ່ອງ

ຕາຕະລາງການບໍລິການສະພາບຄ່ອງແມ່ນຍັງບໍ່ມີການ ບໍລິການໃນ ສປປ ລາວ.

## 4. ການຮັບຮອງເພີ່ມຕື່ມ

ເນື່ອງຈາກເງື່ອນໄຂຂອງ ANZ ກ່ຽວກັບການສະໜອງ ບັນຊີ ແລະ ການໃຫ້ການບໍລິການ, ລູກຄ້າເຫັນດີທີ່ຈະ ປະຕິບັດທຸກເງື່ອນໄຂ, ດຳເນີນການທຸກເອກະສານ ແລະ ສຳເລັດພິທີການຕ່າງໆທີ່ຈຳເປັນ ເພື່ອເຮັດໃຫ້ ທະນາຄານສາມາດ ສະໜອງບັນຊີ ແລະ ໃຫ້ບໍລິການ ເພື່ອສອດຄ່ອງກັບກົດໝາຍ ແລະ ແນວທາງປະຕິບັດ ຂອງ ສປປ ລາວ.